ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 122 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 08 ພຶດສະພາ 2023

# ແຈ້ງການ

**ເຖິງ: ພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ, ພະນັກງານ, ທະຫານ ແລະ ຕຳຫຼວດ ໃນຂອບເຂດທົ່ວປະເທດ ທີ່ນັບຖື ແລະ ຮັກແພງ,**

**ເລື່ອງ: ຈຳໜ່າຍພັນທະບັດທະນາຄານແຫ່ງ ສປປ ລາວ ສະກຸນເງິນກີບ ວົງເງິນ 2.000 ຕື້ກີບ.**

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;

ຫ້ອງການ ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ, ພະນັກງານ, ທະຫານ ແລະ ຕຳຫຼວດ ໃນຂອບເຂດທົ່ວປະເທດ ຊາບວ່າ: ທະນາຄານ ແຫ່ງ ສປປ ລາວ ຈະອອກຈຳໜ່າຍພັນທະບັດທະນາຄານແຫ່ງ ສປປ ລາວ (ທຫລ) ສະກຸນເງິນກີບ ງວດທີ 2 ຄັ້ງທີ 3 ໃຫ້ແກ່ມວນຊົນ ໃນໄວໆນີ້, ວົງເງິນຈຳໜ່າຍທັງໝົດ **2.000.000.000.000 ກີບ (ສອງພັນຕື້ກີບ), ອັດຕາດອກເບ້ຍ 15% ຕໍ່ປີ, ມີອາຍຸຄົບກຳນົດ 06 ເດືອນ. ສຳລັບມື້ເລີ່ມຈຳໜ່າຍພັນທະບັດ ທຫລ ຕົວຈິງ ແລະ ວິທີການຈຳໜ່າຍແມ່ນຈະແຈ້ງໃຫ້ຊາບໃນພາຍຫຼັງຕື່ມ.**

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາທ່ານ ເພື່ອຊາບ ແລະ ກະກຽມຄວາມພ້ອມເພື່ອປະກອບສ່ວນໃນການຖືຄອງພັນທະບັດ ທຫລ ທີ່ຈະອອກຈຳໜ່າຍໃນໄວໆນີ້ດ້ວຍ.

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ເພັດສະກຸນພອນ ແກ້ວວົງວິຈິດ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la